ສຳນັກງານໃຫຍ່

ເລກທີ: 0320 /ທຄຕລ..2026.....
ນະຄອນຫຼວງວຽງຈັນ, ວັນທີ:.....30 JAN 2026.....

ໜັງສືແຈ້ງການ

ຮຽນ: ທ່ານລູກຄ້າ, ຜູ້ຖືຮຸ້ນ ທຄຕລ ທີ່ເຄົາລົບ ແລະ ນັບຖື;

ເລື່ອງ: ລາຍງານກ່ຽວກັບການປະເດັນສັງຄົມ ບັນຊີລູກຄ້າ ທຄຕລ ຖືກລັກຂໍ້ມູນສ່ວນຕົວ ແລະ ດຳເນີນທຸລະກຳໂອນເງິນອອກຈາກບັນຊີທະນາຄານ.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ຂໍຖືເປັນກຽດຮຽນລາຍງານມາຍັງທ່ານຊາບກ່ຽວກັບປະເດັນ ບັນຊີລູກຄ້າ ທຄຕລ ຖືກລັກຂໍ້ມູນສ່ວນຕົວ ແລະ ດຳເນີນທຸລະກຳໂອນເງິນອອກຈາກບັນຊີທະນາຄານ ໃນວັນທີ **16/01/2026** ໂດຍມີລາຍລະອຽດດັ່ງນີ້:

ໃນວັນທີ **16/01/2026** ມີລູກຄ້າ ທຄຕລ ທ່ານໜຶ່ງເຂົ້າມາແຈ້ງຕໍ່ກັບພະນັກງານ ທຄຕລ ເພື່ອຂໍກວດເບິ່ງການເຄື່ອນໄຫວຂອງບັນຊີຂອງຕົນເອງ ເນື່ອງຈາກ ບັນຊີຂອງຜູ້ກ່ຽວ ມີເງິນໂອນອອກຈຳນວນ: **621,000,000** ກີບ ແລະ **13,450** ໂດລາ. ທຸລະກຳທີ່ເກີດຂຶ້ນຕົວຈິງແມ່ນການເຄື່ອນໄຫວໂອນເງິນອອກຈາກບັນຊີຂອງຜູ້ກ່ຽວໄປບັນຊີບຸກຄົນອື່ນ ເຊິ່ງເຈົ້າຂອງບັນຊີໄດ້ຢັ້ງຢືນເບື້ອງຕົ້ນວ່າບໍ່ໄດ້ເປັນຜູ້ເຮັດທຸລະກຳດັ່ງກ່າວ.

ຜ່ານການກວດສອບການເຄື່ອນໄຫວຄືນເຫັນວ່າ ແມ່ນເຈົ້າຂອງບັນຊີເອງ ໄດ້ມີການຫຼົງເຊື່ອກຸ່ມມິດສາຊີບ ໂດຍກົດລິ້ງ, ວີດີໂອຄອລ ພ້ອມກັບການໃຫ້ຂໍ້ມູນສ່ວນຕົວ, ລະຫັດຜ່ານ, ແລະ ສົ່ງລະຫັດ **OTP** ໃຫ້ແກ່ກຸ່ມມິດສາຊີບ ສິ່ງຜົນເຮັດໃຫ້ມິດສາຊີບໄດ້ຂໍ້ມູນສ່ວນຕົວ ແລະ ສາມາດເຂົ້າ **BCEL One** ຂອງ ລູກຄ້າທ່ານດັ່ງກ່າວໄດ້. ທຄຕລ ຂໍຢັ້ງຢືນວ່າ ການນຳໃຊ້ ແອັບພິເຄຊັ່ນ **BCEL One** ມີຄວາມປອດໄພສູງ, ເຫດການສູນເສຍທີ່ເກີດຂຶ້ນ ລະບົບຂອງທະນາຄານແມ່ນບໍ່ໄດ້ຖືກແຮັກ ແຕ່ເປັນການໃຫ້ຂໍ້ມູນສ່ວນຕົວຂອງຜູ້ນຳໃຊ້ເອງ.

ທຄຕລ ຂໍແຈ້ງເຕືອນລູກຄ້າທຸກທ່ານ ໃຫ້ມີສະຕິ ແລະ ລະມັດລະວັງການໃຫ້ຂໍ້ມູນສ່ວນຕົວແກ່ບຸກຄົນອື່ນ, ທຄຕລ ຈະບໍ່ຮ້ອງຂໍຂໍ້ມູນໃດໆນຳລູກຄ້າກ່ອນ, ການກົດເຂົ້າລິ້ງ ທີ່ຖືກສົ່ງມາຈາກຄົນທີ່ບໍ່ຮູ້ຈັກ ແມ່ນບໍ່ມີຄວາມປອດໄພສ່ຽງຕໍ່ການຖືກລັກຂໍ້ມູນສ່ວນຕົວ.

ລູກຄ້າທ່ານໃດ ມີຂໍ້ສົງໄສ ຫຼື ຄຳຖາມ ຕໍ່ກັບການໃຊ້ບໍລິການແອັບພິເຄຊັ່ນ **BCEL One** ສາມາດສອບຖາມໂດຍກົງນຳ ທຄຕລ ຜ່ານທຸກໆຊ່ອງທາງທີ່ເປັນທາງການ ເຊັ່ນ: ສາຍດ່ວນ **1555, One Care** ແລະ ເຄົ້າເຕ້ີ ບໍລິການທີ່ສຳນັກງານໃຫຍ່, ສາຂາ ແລະ ໜ່ວຍບໍລິການໃນຂອບເຂດທົ່ວປະເທດ.

ດັ່ງນັ້ນ ຈຶ່ງຮຽນລາຍງານມາຍັງທ່ານເພື່ອຮັບຊາບ.

ຜູ້ອຳນວຍການ

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ BANQUE POUR LE COMMERCE EXTERIEUR LAO PUBLIC

ນ. ສາຍສະໝອນ ຈັນທະຈັກ